COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ວິທີການລະບຸຕົວຜູ້ດຳເນີນການສຳຫຼວດພົນລະເມືອງ

*ມີຄຳຖາມບໍ່? ໂທຫາເບີສາຍດ່ວນການສຳຫຼວດສຳມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສຳລັບພາສາອັງກິດ ແລະ ພາສາອື່ນໆ. ສຳລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline*

## ສຳນັກງານສຳຫຼວດພົນລະເມືອງຈະສົ່ງຄົນມາທີ່ເຮືອນຂ້ອຍບໍ່?

ການສຳຫຼວດພົນລະເມືອງຈະເລີ່ມໃນເດືອນມີນາ ປີ 2020 ໃນເຂດຫ່າງໄກສອກຫຼີກຂອງອາລາສກາ ແລະ ທຸກຄົວເຮືອນຈະໄດ້ຮັບການເຊີນເພື່ອຕອບຂໍ້ມູນຂອງພວກເຂົາໃນເດືອນ **ມີນາ 2020**. ສຳນັກງານສຳຫຼວດພົນລະເມືອງຈະສົ່ງຄຳແນະນຳ ແລະ ຄຳແຈ້ງເຕືອນໃຫ້ທ່ານຕອບໃນການສຳຫຼວດຈົນເຖິງທ້າຍເດືອນເມສາ. ທ່ານສາມາດຕອບຄຳຖາມໂດຍຜ່ານທາງໂທລະສັບ, ອອນໄລ໌ ຫຼື ຜ່ານທາງແບບຟອມເຈ້ຍ. ***ຖ້າທ່ານຕອບຟອມການສຳຫຼວດໃນເດືອນມີນາ ຫຼື ເມສາ, ຫຼັງຈາກນັ້ນຜູ້ດຳເນີນການສຳຫຼວດພົນລະເມືອງຈະບໍ່ສົ່ງແບບຟອມເຖິງເຮືອນຂອງທ່ານເພື່ອຮັບຄຳຕອບຂອງທ່ານທີ່ຂາດຫາຍ. ເລີ່ມແຕ່ກາງເດືອນພຶດສະພາ, ຜູ້ດຳເນີນການສຳຫຼວດພົນລະເມືອງຈະມາແວ່ແຕ່ລະຄົວເຮືອນທີ່ຍັງບໍ່ໄດ້ຕອບການສຳຫຼວດພົນລະເມືອງ***

## ຜູ້ດຳເນີນການສຳຫຼວດພົນລະເມືອງແມ່ນຫຍັງ?

ຜູ້ດຳເນີນການສຳຫຼວດພົນລະເມືອງ ຫຼື ຄົນສຳຫຼວດພົນລະເມືອງແມ່ນຄົນທີ່ຖືກຈ້າງຈາກຊຸມຊົນທ້ອງຖິ່ນຂອງທ່ານໂດຍສຳນັກງານສຳຫຼວດພົນລະເມືອງເພື່ອມາເຄາະປະຕູ ແລະ ເກັບກຳຄຳຕອບກ່ຽວກັບການສຳຫຼວດພົນລະເມືອງສຳລັບບັນດາຄົວເຮືອນທີ່ຍັງບໍ່ທັນໄດ້ໃຫ້ຄຳຕອບໃນການສຳຫຼວດ.

## ຜູ້ດຳເນີນການສຳຫຼວດພົນລະເມືອງຈະມາເຄາະປະຕູເມື່ອໃດ?

ສຳລັບບັນດາພື້ນທີ່ສ່ວນໃຫ່ຍ, ບັນດາຜູ້ດຳເນີນການສຳຫຼວດພົນລະເມືອງຈະໄປຢ້ຽມຢາມແຕ່ລະຄົວເຮືອນໃນເດືອນພຶດສະພາ ເຖິງ ທ້າຍເດືອນກໍລະກົດ. ໃນເຂດທີ່ມີນັກສຶກສາວິທະຍາໄລນອກໂຮງຮຽນ ແລະ ບ່ອນທີ່ມີປະຊາຊົນອາໄສຢູ່ຫຼວງຫຼາຍ (ຕົວຢ່າງ, ບັນດາສູນອາວຸໂສ), ຂະບວນການນີ້ຈະເລີ່ມຕົ້ນໃນເດືອນເມສາ.

## ນີ້ແມ່ນວິທີລະບຸຜູ້ດຳເນີນການສຳຫຼວດພົນລະເມືອງ

***ກ່ອນອື່ນໝົດ, ຂໍເບິ່ງບັດປະຈຳຕົວຂອງພວກເຂົາ, ຜູ້ດຳເນີນການສຳຫຼວດພົນລະເມືອງທຸກຄົນຈະຖືປ້າຍຂອງລັດຖະບານທີ່ປະກອບມີ: ຊື່, ຮູບຖ່າຍ, ກາລາຍນ້ຳຂອງຫ້ອງການສຳຫຼວດພົນລະເມືອງຂອງສະຫະລັດ ແລະ ວັນໝົດອາຍຸ.***

*ໂລໂກ້ສຳນັກງານສຳຫຼວດພົນລະເມືອງທີ່ [www.census.gov](http://www.census.gov)*

- ຜູ້ດຳເນີນການສຳຫຼວດພົນລະເມືອງປະກອບມີຖົງພະນັກງານກັບໂລໂກ້ສຳນັກງານສຳຫຼວດພົນລະເມືອງ ແລະ ໂທລະສັບໄອໂຟນ.
- ຜູ້ດຳເນີນການສຳຫຼວດພົນລະເມືອງຈະສະເໜີຈົດໝາຍເປັນພາສາອັງກິດຈາກສຳນັກງານສຳຫຼວດພົນລະເມືອງໃຫ້ທ່ານ ຊຶ່ງເປັນຈົດໝາຍທາງການທີ່ລະບຸວ່າຍ້ອນຫຍັງພວກເຂົາຈຶ່ງມາຢ້ຽມທີ່ຢູ່ອາໄສຂອງທ່ານ.
- ຜູ້ດຳເນີນການສຳຫຼວດພົນລະເມືອງຈະດຳເນີນການເດີນສຳຫຼວດຂອງພວກເຂົາໃນລະຫວ່າງເວລາທ້ອງຖິ່ນ 9 ໂມງເຊົ້າ ແລະ 9 ໂມງແລງ
- ເມື່ອມີການຮ້ອງຂໍ, ຜູ້ດຳເນີນການສຳຫຼວດພົນລະເມືອງຈະໃຫ້ຂໍ້ມູນຕິດຕໍ່ຂອງຜູ້ຄຸມງານຂອງພວກເຂົາ ແລະ/ຫຼື ເບີໂທລະສັບສຳລັບ [ສູນສຳຫຼວດປະຈຳພາກພື້ນ](https://2020census.gov/en/contact-us/rcc) ([https://2020census.gov/en/contact-us/rcc](https://2020census.gov/en/contact-us/rcc)) ຊຶ່ງຈະຄວບຄຸມກິດຈະກຳທັງໝົດທີ່ຕາງໜ້າໃຫ້ພາກສະໜາມຢູ່ໃນພື້ນທີ່ຂອງທ່ານໃຫ້ທ່ານຮູ້
- ຖ້າທ່ານຕ້ອງການຢັ້ງຢືນເປັນເອກະລາດວ່າບຸກຄົນທີ່ເຄາະປະຕູຂອງທ່ານເປັນພະນັກງານຂອງສຳນັກງານສຳຫຼວດພົນລະເມືອງ, ທ່ານສາມາດ ຕິດຕໍ່ຫາສູນສຳຫຼວດປະຈຳພາກພື້ນຢູ່ໃນພື້ນທີ່ຂອງທ່ານ.
- *ຜູ້ດຳເນີນການສຳຫຼວດພົນລະເມືອງຈະບໍ່ເຄີຍຂໍເຂົ້າໄປໃນເຮືອນທ່ານ*

## ຜູ້ດຳເນີນການສຳຫຼວດພົນລະເມືອງຈະຖາມຂ້ອຍຫຍັງແດ່?

ຜູ້ດຳເນີນການສຳຫຼວດພົນລະເມືອງຈະຖາມຄຳຖາມທີ່ປະກົດມີຢູ່ໃນແບບຟອມການສຳຫຼວດພົນລະເມືອງ (ທ່ານຕ້ອງມີອາຍຸຢ່າງໜ້ອຍ 15 ປີເພື່ອທີ່ຈະຕອບຄຳຖາມ): ທີ່ຢູ່, ໝາຍເລກໂທລະສັບ, ຈຳນວນຄົນທີ່ອາໄສຢູ່ໃນເຮືອນທ່ານ, ບໍ່ວ່າທ່ານຈະເຊົ່າ ຫຼື ເປັນເຈົ້າຂອງເຮືອນ, ແລະ ຂໍ້ມູນພື້ນຖານກ່ຽວກັບຜູ້ອາໄສແຕ່ລະຄົນ (ຊື່, ອາຍຸ, ວັນເດືອນປີເກີດ, ເພດ, ຄວາມສຳພັນກັບທ່ານ, ເຊື້ອຊາດ, ຊົນເຜົ່າ). ຢ່າລືມຈົ່ງລວມທຸກຄົນທີ່ອາໄສຢູ່ໃນທີ່ຢູ່ຂອງທ່ານ --ເດັກແດງ, ເດັກນ້ອຍ, ສະມາຊິກຄອບຄົວຄົນອື່ນໆ, ເພື່ອນຮ່ວມຫ້ອງ, ບາງຄັ້ງຄົນລືມລວມທັງເດັກນ້ອຍເຂົ້າພ້ອມ, ແຕ່ມັນມີຄວາມສຳຄັນຫຼາຍໃນການນັບພວກເຂົາເຂົ້າອີກຄືກັນ. ໃຫ້ເບິ່ງເອກະສານຂໍ້ມູນຂອງພວກເຮົາກ່ຽວກັບການນັບຄອບຄົວ ແລະ ເດັກນ້ອຍຂອງທ່ານໄດ້ທີ່ [www.CountUsIn2020.org/resources](http://www.CountUsIn2020.org/resources) ສຳລັບຂໍ້ມູນເພີ່ມເຕີມ.

***ຜູ້ດຳເນີນການສຳຫຼວດພົນລະເມືອງຈະບໍ່ຖາມສະຖານະຄວາມເປັນພົນລະເມືອງ, ໃບຂັບຂີ່,ເລກປະກັນສັງຄົມ; ບັດເຄດິດ, ທະນາຄານ, ຫຼື ຂໍ້ມູນທາງການເງິນອື່ນໆ: ເງິນ ຫຼື ການບໍລິຈາກ, ລະຫັດ PIN ຫຼື ລະຫັດລັບ***

ສຳນັກງານສຳຫຼວດພົນລະເມືອງຈະຕິດຕາມຂ້າພະເຈົ້າໄດ້ແນວໃດໃນເດືອນພຶດສະພາຖ້າຂ້າພະເຈົ້າບໍ່ຕອບຄຳຖາມໃນການສຳຫຼວດພົນລະເມືອງ?

- ເລີ່ມແຕ່ກາງເດືອນພຶດສະພາ, ຜູ້ດຳເນີນການສຳຫຼວດພົນລະເມືອງຈະມາເຄາະປະຕູຂອງທ່ານເພື່ອເກັບກຳຄຳຕອບຂອງທ່ານ. ທ່ານສາມາດຕອບໃຫ້ສຳເລັດກັບຜູ້ດຳເນີນການສຳຫຼວດພົນລະເມືອງຢູ່ຕໍ່ໜ້າປະຕູຂອງທ່ານ. ຖ້າທ່ານເຮັດບໍ່ໄດ້ດັ່ງນີ້, ທ່ານກໍ່ສາມາດເຮັດເອງຜ່ານທາງອິນເຕີເນັດ ຫຼື ຜ່ານທາງໂທລະສັບໃນເດືອນກໍລະກົດ.
- ຖ້າບໍ່ມີໃຜຕອບຢູ່ທີ່ປະຕູ, ພວກເຂົາຈະຕິດ “ໃບມາຢ້ຽມ” ໄວ້ທີ່ຄົວເຮືອນ ໃຫ້ທ່ານສາມາດປ້ອນຄຳຕອບຜ່ານທາງອອນໄລ໌ ຫຼື ຜ່ານທາງໂທລະສັບ.
- ຖ້າທ່ານຍັງບໍ່ຕອບ, ພວກເຂົາຈະມາອີກ ແລະ ຕິດໃບໄປສະນີຕິດຕາມໃນອາທິດຕໍ່ມາ
- ຜູ້ດຳເນີນການສຳຫຼວດພົນລະເມືອງຈະມາຢ້ຽມສືບຕໍ່ ຫຼື ໂທນຳຈົນຮອດ 6 ຄັ້ງ.

- ຫຼັງຈາກລອງມາຄັ້ງທີ່ສາມ, ຜູ້ດຳເນີນການສຳຫຼວດພົນລະເມືອງສາມາດຖາມຄົນທີ່ຢູ່ໃກ້ທີ່ເຊື່ອຖືໄດ້ໃຫ້ເປັນ "ຕົວແທນ" ສຳລັບການເກັບຂໍ້ມູນ ເຊັ່ນວ່າ: ເພື່ອນບ້ານ, ຄົນສົ່ງຈົດໝາຍ, ແລະ ອື່ນໆ, ຕໍ່ຈາກນັ້ນຜູ້ດຳເນີນການສຳຫຼວດພົນລະເມືອງຈຶ່ງປ້ອນຂໍ້ມູນໃສ່.
- **ການຊ່ວຍເຫຼືອດ້ານພາສາ**: ເມື່ອຜູ້ດຳເນີນການສຳຫຼວດພົນລະເມືອງພົບອຸປະສັກດ້ານພາສາທີ່ໜ້າປະຕູ, ພວກເຂົາຈະສະແດງບັດປະຈຳຕົວພາສາ ຊຶ່ງມີຂໍ້ຄວາມສັ້ນໆໃນ 59 ພາສາທີ່ບໍ່ແມ່ນພາສາອັງກິດ. ຜູ້ດຳເນີນການສຳຫຼວດພົນລະເມືອງໃຊ້ບັດປະຈຳຕົວພາສາ ເພື່ອຊ່ວຍລະບຸພາສາທີ່ຄົວເຮືອນເວົ້າ ເພື່ອຊ່ວຍໃຫ້ຜູ້ທີ່ສາມາດເວົ້າພາສານັ້ນຕິດຕາມຄົວເຮືອນນັ້ນໄດ້.

*ທ່ານສາມາດຫາຂໍ້ມູນເພີ່ມເຕີ່ມກ່ຽວກັບການສຳຫຼວດສຳມະໂນຄົວໄດ້ທີ່ [www.CountUsIn2020.org/resources](http://www.CountUsIn2020.org/resources).*

